ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເລກທີ 536 /ຈຂ
ສະຫວັນນະເຂດ, ວັນທີ 01 ມີນາ 2024.

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງກອງທຶນສັງຄົມສົງເຄາະແຂວງສະຫວັນນະເຂດ (ສະບັບປັບປຸງ)

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງໃໝ່) ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ຂໍ້ 13;
- ອີງຕາມ ດຳລັດ ວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 169/ລບ, ລົງວັນທີ 19 ມິຖຸນາ 2013;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງ ຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງກອງທຶນສັງຄົມສົງເຄາະແຂວງສະຫວັນນະເຂດ ສະບັບເລກທີ 08/ສພຂ.ສຂ, ລົງວັນທີ 12 ມັງກອນ 2024.

## ເຈົ້າແຂວງ ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການຈັດຕັ້ງປະຕິບັດ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ກວດກາກອງທຶນສັງຄົມສົງເຄາະ ເພື່ອແນໃສ່ຮັບປະກັນການເຄື່ອນໄຫວວຽກງານກອງທຶນໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ, ມີປະສິດທິພາບ, ປະສິດທິຜົນ, ຍຸຕິທຳ, ໂປ່ງໃສ, ສາມາດກວດສອບໄດ້ ໃນການຄຸ້ມຄອງ-ບໍລິຫານ, ບໍລິການກອງທຶນ, ການຊ່ວຍເຫຼືອບັນເທົາທຸກໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດໃຫ້ທົ່ວເຖິງແຕ່ລະເປົ້າໝາຍພາຍໃນແຂວງ.

**ມາດຕາ 2 ການຄຸ້ມຄອງກອງທຶນສັງຄົມສົງເຄາະ**

ການຄຸ້ມຄອງກອງທຶນສັງຄົມສົງເຄາະ ແມ່ນການຄຸ້ມຄອງກອງທຶນທີ່ໄດ້ຈາກງົບປະມານ ຂອງລັດ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທາງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດ.

**ມາດຕາ 3 ອະທິບາຍສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຄຸ້ມຄອງ** ໝາຍເຖິງ ການຄຸ້ມຄອງຊັບສິນ, ວັດຖຸອຸປະກອນ, ທຶນຮອນ ແລະ ອື່ນໆ ທີ່ໄດ້ຈາກການປະກອບສ່ວນຈາກພາກສ່ວນຕ່າງໆ ທັງພາຍໃນ, ຕ່າງປະເທດ ເພື່ອຈັດສັນ ແລະ ນຳໃຊ້ຕາມວັດຖຸປະສົງ;

2. **ກອງທຶນ** ໝາຍເຖິງ ເງິນ ຫຼື ຊັບສິນທີ່ເອົາມາລວມກັນໃຫ້ເປັນກ້ອນອັນດຽວກັນ ເພື່ອຈຸດປະສົງໃນການຊ່ວຍເຫຼືອໃດໜຶ່ງ;

3. **ການສົງເຄາະ** ໝາຍເຖິງ ການໃຫ້ການຊ່ວຍເຫຼືອບັນເທົາທຸກ, ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດ ເພື່ອເປັນການຟື້ນຟູເບື້ອງຕົ້ນ;

4. **ໄພພິບັດ** ໝາຍເຖິງ ໄພອັນຕະລາຍທີ່ເກີດຂຶ້ນຈາກທຳມະຊາດ ແລະ ການກະທຳຂອງມະນຸດ ເຊັ່ນ: ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວ, ໝາກເຫັບຕົກ, ດິນເຈື່ອນ, ແຜ່ນດິນໄຫວ, ພູເຂົາໄຟລະເບີດ ເຊິ່ງໄດ້ເກີດຂຶ້ນ ແລະ ສ້າງຄວາມເສຍຫາຍຕໍ່ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ, ອື່ນໆ;

5. **ເດັກທີ່ຕ້ອງການໆປົກປ້ອງພິເສດ** ໝາຍເຖິງ ເດັກກຳພ້າ, ກຳພອຍ, ເດັກພິການ, ເດັກຖືກປະຖິ້ມ, ເດັກທີ່ຖືກທຳຮ້າຍຮ່າງກາຍ, ເດັກທີ່ຖືກຂູດຮີດທາລຸນທາງເພດ, ເດັກທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ;

6. **ຜູ້ດ້ອຍໂອກາດ** ໝາຍເຖິງ ເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການ, ຜູ້ເຖົ້າປ່ຽວພອຍທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກ;

7. **ວັດຖຸທີ່ໃຊ້ໃນການສົງເຄາະ** ໝາຍເຖິງ ເຄື່ອງອຸປະໂພກ-ບໍລິໂພກ ເຊັ່ນ: ສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ສິ່ງປຸກສ້າງ ແລະ ເຄື່ອງມືປະກອບອາຊີບ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງແຂວງ, ເມືອງ-ນະຄອນ ສະໜອງບຸກຄະລາກອນ, ງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ຕາມຄວາມສາມາດ ແລະ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນເຂົ້າໃນວຽກງານການຄຸ້ມຄອງກອງທຶນສັງຄົມສົງເຄາະ;

ຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການປະກອບສ່ວນທາງດ້ານທຶນຮອນ, ສະຕິປັນຍາ ແລະ ທຸກກຳລັງແຮງຂອງຕົນເຂົ້າໃນກອງທຶນສັງຄົມສົງເຄາະ.

**ມາດຕາ 5 ຫຼັກການພື້ນຖານຂອງການເຄື່ອນໄຫວວຽກງານການຄຸ້ມຄອງກອງທຶນສັງຄົມສົງເຄາະ**

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ທີ່ວາງອອກໃນແຕ່ລະໄລຍະ;
2. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງກຸ່ມເປົ້າໝາຍ;
3. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ທຸກພາກສ່ວນມີສ່ວນຮ່ວມໄດ້ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດຂອງການນຳໃຊ້**

ຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງວຽກງານສັງຄົມສົງເຄາະ ພາຍໃນແຂວງສະຫວັນນະເຂດ.

**ມາດຕາ 7 ການຮ່ວມມືກັບອົງການຈັດຕັ້ງສາກົນ**

ອົງການປົກຄອງແຂວງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຄະນະຮັບຜິດຊອບກອງທຶນສັງຄົມສົງເຄາະມີການຮ່ວມມື ກັບອົງການຈັດຕັ້ງສາກົນ ເພື່ອເປັນການຍາດແຍ່ງການຊ່ວຍເຫຼືອ ແລະ ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານທີ່ຈຳເປັນເຂົ້າໃນວຽກງານກອງທຶນສັງຄົມສົງເຄາະ.

## ໝວດທີ 2
## ກອງທຶນ, ແຫຼ່ງທຶນ ແລະ ການຄຸ້ມຄອງລາຍຮັບ - ລາຍຈ່າຍ ຂອງກອງທຶນສັງຄົມສົງເຄາະ

**ມາດຕາ 8 ກອງທຶນສັງຄົມສົງເຄາະ**

ກອງທຶນສັງຄົມສົງເຄາະ ແມ່ນກອງທຶນໜຶ່ງທີ່ແຂວງໄດ້ສ້າງຂຶ້ນ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍສັງຄົມສົງເຄາະໃຫ້ແກ່ກຸ່ມເປົ້າໝາຍຕາມທີ່ໄດ້ກຳນົດໄວ້ ໃນໝວດທີ 03 ມາດຕາ 12,13,14 ແລະ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ແຫຼ່ງທຶນສັງຄົມສົງເຄາະ**

1. ແຫຼ່ງທຶນທີ່ລັດປະກອບສ່ວນ ຫຼື ສົມທົບໃນແຕ່ລະປີ ຕາມແຜນແບ່ງປັນງົບປະມານຂອງລັດ;
2. ແຫຼ່ງທຶນຈາກການປະກອບສ່ວນຂອງພະນັກງານ-ລັດຖະກອນ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ທີ່ມີໃນທົ່ວແຂວງສະຫວັນນະເຂດ ປະກອບສ່ວນຜູ້ລະ 5.000 ກີບ ກີບ/ຄົນ/ເດືອນ ຫຼື 60.000 ກີບ/ຄົນ/ປີ ນັບທັງຜູ້ທີ່ຮັບເງິນເດືອນຈາກຂັ້ນສູນກາງ ຫຼື ສາຍຕັ້ງຂອງຕົນ;
3. ປະຊາຊົນພາຍໃນບ້ານປະກອບສ່ວນ ຄອບຄົວລະ 12.000 ກີບ/ປີ ນັບທັງຄອບຄົວພະນັກງານ, ທະຫານ, ຕຳຫຼວດ ທີ່ນອນໃນບ້ານນັ້ນ ໂດຍຖືເອົາສຳມະໂນຄົວເປັນຫຼັກ;
4. ການປຸກລະດົມການປະກອບສ່ວນຈາກບັນດາຫົວໜ່ວຍການຜະລິດທຸລະກິດ ແລະ ຜູ້ປະກອບກິດຈະການຕ່າງໆ;
5. ໄດ້ຈາກການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຊ່ວຍເຫຼືອຂອງຕ່າງປະເທດ.

**ມາດຕາ 10 ວິທີການຈັດເກັບ, ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ**

1. ວິທີການຈັດເກັບ.

- ລາຍຮັບຈາກພະນັກງານລັດຖະກອນ ແມ່ນມອບໃຫ້ທະນາຄານແຫ່ງຊາດປະຈຳແຂວງສະຫວັນນະເຂດເປັນຜູ້ຫັກເອົາຈາກບັນຊີເງິນເດືອນຂອງພະນັກງານລັດຖະກອນ ໃນແຕ່ລະເດືອນ ແລ້ວມອບເຂົ້າບັນຊີກອງທຶນຢູ່ທະນາຄານແຫ່ງຊາດປະຈຳແຂວງສະຫວັນນະເຂດ ໝາຍເລກບັນຊີ 47600000.00.213.1501(ກີບ);

- ລາຍຮັບຈາກກໍາລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມອບໃຫ້ກົມກອງເປັນຜູ້ທ້ອນໂຮມ ແລະ ມອບເຂົ້າບັນຊີກອງທຶນ ໝາຍເລກບັນຊີ 47600000.00.213.1501 (ກີບ) ໂດຍມອບປີລະ 2 ຄັ້ງຄື: ຄັ້ງທີ 1 ບໍ່ໃຫ້ກາຍ ວັນທີ 30 ມີຖຸນາ ແລະ ຄັ້ງທີ 2 ບໍ່ໃຫ້ກາຍ ວັນທີ 30 ພະຈິກ ຂອງທຸກໆປີ;

- ລາຍຮັບຈາກຄອບຄົວແມ່ນມອບໃຫ້ເມືອງເປັນຜູ້ທ້ອນໂຮມແລ້ວນໍາມາມອບເຂົ້າບັນຊີກອງທຶນສັງຄົມສົງເຄາະ ຂັ້ນແຂວງ 70% ແລະ ມອບເຂົ້າກອງທຶນສັງຄົມສົງເຄາະ ຂັ້ນເມືອງ-ນະຄອນ 30% ຕ້ອງມອບໃຫ້ສໍາເລັດກ່ອນວັນທີ 30 ມີຖຸນາ ຂອງທຸກໆປີ;

2. ການຄຸ້ມຄອງລາຍຮັບ :

ກ. ຂັ້ນແຂວງ: ກອງທຶນສັງຄົມສົງເຄາະ ແຂວງສະຫວັນນະເຂດ ໄດ້ເປີດບັນຊີຢູ່ຄັງເງິນແຫ່ງຊາດປະຈໍາແຂວງສະຫວັນນະເຂດ ໝາຍເລກບັນຊີ 47600000.00.213.1501(ກີບ), ທຸກແຫຼ່ງລາຍຮັບຂອງກອງທຶນສາມາດນໍາໄປມອບໄດ້ສອງວິທີ:

+ ມອບຜ່ານກອງເລຂາຊ່ວຍວຽກຂອງຄະນະກໍາມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ຂັ້ນແຂວງ ຢູ່ທີ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ (ຂະແໜງສັງຄົມສົງເຄາະ);

+ ມອບຜ່ານບັນຊີຂອງກອງທຶນຢູ່ຄັງເງິນແຫ່ງຊາດປະຈໍາແຂວງ, ການມອບເງິນທຸກໆຄັ້ງຕ້ອງປະຕິບັດຕາມ ຫຼັກການ-ການເງິນ ແລະ ພາຍຫຼັງມອບແລ້ວ ຕ້ອງແຈ້ງກອງເລຂາຂອງກອງທຶນ ເພື່ອຕິດຕາມກວດກາ, ຄຸ້ມຄອງ ແລະ ສະເໜີໃຫ້ການຍ້ອງຍໍຊົມເຊີຍ.

ຂ. ຂັ້ນເມືອງ-ນະຄອນ: ລາຍຮັບກອງທຶນຂັ້ນເມືອງ-ນະຄອນ 30 % ແມ່ນມອບໃຫ້ຄະນະກໍາມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ຂັ້ນເມືອງ-ນະຄອນ ເກັບຮັກສາໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ.

3. ການຄຸ້ມຄອງລາຍຈ່າຍ:

- ການຈ່າຍເງິນສົງເຄາະແມ່ນຈ່າຍໃຫ້ບັນດາເປົ້າໝາຍຕາມທີ່ໄດ້ກໍານົດໄວ້ ໃນໝວດທີ 03 ມາດຕາ 12, 13,14 ແລະ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ໂດຍຜ່ານການຄົ້ນຄວ້າ ແລະ ຕົກລົງຈາກຄະນະກໍາມະການຄຸ້ມຄອງກອງທຶນສັງຄົມສົງເຄາະ;

- ຈ່າຍເຂົ້າໃນການເກັບກໍາຂໍ້ມູນກຸ່ມເປົ້າໝາຍສັງຄົມສົງເຄາະ ແລະ ສິ່ງຈໍາເປັນທີ່ຕິດພັນກັບວຽກງານສັງຄົມສົງເຄາະ ຕາມການຕົກລົງເຫັນດີຂອງຄະນະກໍາມະການຄຸ້ມຄອງກອງທຶນສັງຄົມສົງເຄາະ.

## ໝວດທີ 3
## ການສົງເຄາະ, ເປົ້າໝາຍການສົງເຄາະ, ວິທີການ ແລະ ຮູບແບບການສົງເຄາະ

**ມາດຕາ 11 ການສົງເຄາະ**

ການສົງເຄາະແມ່ນການເຄື່ອນໄຫວຊ່ວຍເຫຼືອບັນເທົາທຸກ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ຜູ້ດ້ອຍໂອກາດ ເພື່ອໃຫ້ການຊ່ວຍເຫຼືອໃນເບື້ອງຕົ້ນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງ ສະບັບນີ້.

**ມາດຕາ 12 ເປົ້າໝາຍການສົງເຄາະ**

1. ບຸກຄົນ ຫຼື ຄອບຄົວ ທີ່ໄດ້ຮັບຜົນກະທົບ ຈາກໄພພິບັດຕ່າງໆ ທີ່ທຸກຍາກ;

2. ບຸກຄົນທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດພາໃຫ້ຕິດພະຍາດທີ່ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ ທີ່ທຸກຍາກ;

3. ເດັກກຳພ້າ-ກຳພອຍຂາດທີ່ເພິ່ງພາອາໄສ, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ;

4. ຜູ້ອາຍຸສູງ 60 ປີຂຶ້ນໄປ, ທີ່ປ່ວຍພອຍ, ທຸກຍາກ, ຂາດທີ່ເພິ່ງພາອາໄສ, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ;

5. ຜູ້ພິການທາງຮ່າງກາຍ ຫຼື ມັນສະໝອງ ທີ່ບໍ່ສາມາດຊ່ວຍຕົນເອງ, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທຸກຍາກ.

**ມາດຕາ 13 ວິທີການສົງເຄາະ**

ແມ່ນການຊ່ວຍເຫຼືອຕໍ່ຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ, ເດັກກຳພ້າ-ກຳພອຍ ທີ່ມີອາຍຸຕ່ຳກວ່າ 18 ປີ, ຜູ້ອາຍຸສູງ, ຄົນພິການທາງດ້ານຮ່າງກາຍ-ມັນສະໝອງ, ຜູ້ທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້, ຂາດທີ່ເພິ່ງພາອາໄສ ແລະ ອາໄສຢູ່ນຳຄອບຄົວທຸກຍາກ ເຊິ່ງການສົງເຄາະຕ້ອງໄດ້ຜ່ານການຄົ້ນຄວ້າຂອງຄະນະກຳມະການຄຸ້ມຄອງກອງທຶນ.

**ມາດຕາ 14 ຮູບແບບການສົງເຄາະ**

1. ຊ່ວຍເປັນເງິນ ຫຼື ເປັນວັດຖຸ;

2. ຊ່ວຍເບິ່ງແຍງ, ລ້ຽງດູຊີວິດການເປັນຢູ່ ແລະ ສຸຂະພາບ;

3. ຊ່ວຍຝຶກອົບຮົມວິຊາຊີບ.

**ມາດຕາ 15 ການສົງເຄາະຕໍ່ເປົ້າໝາຍ**

1. ການສົງເຄາະເດັກ: ຕາມທີ່ໄດ້ກຳນົດໄວ້ ໃນໝວດ 03 ມາດຕາ 12 ຂໍ້ 3 ຈະໄດ້ຮັບການຊ່ວຍເຫຼືອສົງເຄາະ ດັ່ງນີ້:

- ເຂົ້າສານ 12 ກິໂລ/ຄົນ/ເດືອນ ສູງສຸດບໍ່ເກີນ 03 ເດືອນ;
- ເຄື່ອງນຸ່ງຫົ່ມຕາມຄວາມຈຳເປັນ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຮັບຜິດຊອບຊ່ວຍເຫຼືອຕາມພາລະບົດບາດຂອງຕົນ ເພື່ອຊຸກຍູ້ສົ່ງເສີມໃຫ້ເດັກໄດ້ເຂົ້າໂຮງຮຽນ, ຝຶກວິຊາຊີບ, ພັດທະນາສີມືແຮງງານ, ມີວຽກເຮັດງານທຳ, ໄດ້ຮັບການປິ່ນປົວສຸຂະພາບ, ໄດ້ຮັບຄຳປຶກສາທາງດ້ານຈິດໃຈ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ;
- ເດັກທີ່ຖືກຕ້ອງຕາມເງື່ອນໄຂຂອງໂຄງການບ້ານເດັກ SOS ຈະຖືກນຳເຂົ້າບ້ານເດັກ SOS ເພື່ອສືບຕໍ່ເບິ່ງແຍງ.

2. ການສົງເຄາະຜູ້ພິການ: ຕາມທີ່ໄດ້ກຳນົດໄວ້ ໃນໝວດ 03 ມາດຕາ 12 ຂໍ້ 5 ຈະໄດ້ຮັບການຊ່ວຍເຫຼືອສົງເຄາະດັ່ງນີ້:

- ເຂົ້າສານ 12 ກິໂລ/ຄົນ/ເດືອນ ສູງສຸດບໍ່ເກີນ 03 ເດືອນ;
- ເຄື່ອງນຸ່ງຫົ່ມຕາມຄວາມຈຳເປັນ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຮັບຜິດຊອບຊ່ວຍເຫຼືອຕາມພາລະບົດບາດຂອງຕົນ ເພື່ອຊຸກຍູ້ສົ່ງເສີມໃຫ້ໄດ້ຮັບການປິ່ນປົວດ້ານສຸຂະພາບ, ຟື້ນຟູຮ່າງກາຍ, ໃຫ້ຄໍາປຶກສາທາງດ້ານຈິດໃຈ, ປະກອບອຸປະກອນອົງຄະທຽມ, ຝຶກວິຊາຊີບ, ພັດທະນາສີມືແຮງງານ ເພື່ອມີວຽກເຮັດງານທໍາ.

3. ການສົງເຄາະຜູ້ອາຍຸສູງ: ຕາມທີ່ໄດ້ກໍານົດໄວ້ ໃນໝວດ 03 ມາດຕາ 12 ຂໍ້ 4 ຈະໄດ້ຮັບການຊ່ວຍເຫຼືອ ສົງເຄາະ ດັ່ງນີ້:

- ເຂົ້າສານ 12 ກິໂລ/ຄົນ/ເດືອນ ສູງສຸດບໍ່ເກີນ 03 ເດືອນ;

- ເຄື່ອງນຸ່ງຫົ່ມຕາມຄວາມຈໍາເປັນ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຮັບຜິດຊອບຊ່ວຍເຫຼືອຕາມພາລະບົດບາດຂອງຕົນ ເພື່ອຊຸກຍູ້ສົ່ງເສີມໃຫ້ຜູ້ອາຍຸສູງໄດ້ຮັບການປິ່ນປົວດ້ານສຸຂະພາບ, ຟື້ນຟູຮ່າງກາຍ, ໃຫ້ຄໍາປຶກສາທາງດ້ານຈິດໃຈ.

4. ການສົງເຄາະຜູ້ທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ: ຕາມທີ່ໄດ້ກໍານົດໄວ້ ໃນໝວດ 03 ມາດຕາ 12 ຂໍ້ 2 ຈະໄດ້ຮັບການຊ່ວຍເຫຼືອສົງເຄາະ ດັ່ງນີ້:

- ເຄື່ອງອຸປະໂພກ, ບໍລິໂພກປະຈໍາວັນ ໃນໄລຍະຢູ່ສະຖານທີ່ພັກເຊົາຊົ່ວຄາວ ໃຫ້ການຊ່ວຍເຫຼືອສົງເຄາະ 25.000 ກີບ/ຄົນ/ມື້ ສູງສຸດບໍ່ເກີນ 07 ມື້;

- ຈັດສົ່ງໃຫ້ຄອບຄົວຍາດພີ່ນ້ອງ, ສູນ ຫຼື ພະແນກການທີ່ກ່ຽວຂ້ອງພາຍໃນແຂວງ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຮັບຜິດຊອບຊ່ວຍເຫຼືອຕາມພາລະບົດບາດຂອງຕົນ ເພື່ອຊຸກຍູ້ສົ່ງເສີມໃຫ້ໄດ້ຮັບການຟື້ນຟູຮ່າງກາຍ, ໃຫ້ຄໍາປຶກສາທາງດ້ານຈິດໃຈ, ຝຶກວິຊາຊີບ, ພັດທະນາສີມືແຮງງານ ເພື່ອມີວຽກເຮັດງານທໍາຕາມຄວາມສາມາດຂອງຜູ້ກ່ຽວ;

- ກໍລະນີຜູ້ທີ່ຕິດພະຍາດຕິດແປດຮ້າຍແຮງ ມີຄວາມຈໍາເປັນຕ້ອງໄດ້ໄປປິ່ນປົວຢູ່ໂຮງໝໍໃດໜຶ່ງ ຂອງລັດຢູ່ພາຍໃນແຂວງ ແມ່ນຈະໄດ້ຮັບການຊ່ວຍເຫຼືອທາງດ້ານການເດີນທາງ, ຄ່າກິນຢູ່ພັກເຊົາໂດຍອີງໃສ່ລະບຽບການ ຂອງລັດເປັນພື້ນຖານ.

5. ການສົງເຄາະບຸກຄົນ ຫຼື ຄອບຄົວ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ: ຕາມທີ່ໄດ້ກໍານົດໄວ້ໃນໝວດ 03 ມາດຕາ 12 ຂໍ້ 1 ຈະໄດ້ຮັບການຊ່ວຍເຫຼືອສົງເຄາະ ດັ່ງນີ້:

- ໃຫ້ການຊ່ວຍເຫຼືອບຸກຄົນ ຫຼື ຄອບຄົວ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ບ່ອນຢູ່ອາໄສ ທີ່ກໍາລັງອາໄສຢູ່ ແຕ່ບໍ່ສາມາດອາໄສຢູ່ໄດ້ ຈະໄດ້ຮັບການຊ່ວຍເຫຼືອສົມທົບປຸກສ້າງສ້ອມແປງ ດັ່ງນີ້:

- ຈໍານວນຄົນ 1- 4 ຄົນ ຈະໄດ້ຮັບສັງກະສີ 40 ແຜ່ນ, ເຫຼັກຕະປູ 10 ກິໂລ/ຄອບຄົວ;
- ຈໍານວນຄົນ 5-7 ຄົນ ຈະໄດ້ຮັບສັງກະສີ 50 ແຜ່ນ, ເຫຼັກຕະປູ 15 ກິໂລ/ຄອບຄົວ;
- ຈໍານວນ 8 ຄົນຂຶ້ນໄປ ຈະໄດ້ຮັບສັງກະສີ 60 ແຜ່ນ, ເຫຼັກຕະປູ 20 ກິໂລ/ຄອບຄົວ;

- ນອກຈາກວັດຖຸສົມທົບປຸກສ້າງຂ້າງເທິງນີ້ແລ້ວ, ຫາກມີການສູນເສຍເຄື່ອງໃຊ້ສອຍ ແລະ ເຄື່ອງນຸ່ງຫົ່ມທີ່ຈໍາເປັນໃນຄອບຄົວ ຍັງຈະໄດ້ຮັບການຊ່ວຍເຫຼືອເຄື່ອງໃຊ້ສອຍພາຍໃນຄົວເຮືອນຕື່ມອີກ ໃນມູນຄ່າບໍ່ເກີນ 1.000.000 ກີບ/ຄອບຄົວ;

- ສັງກະສີທີ່ນໍາໃຊ້ໃນການສົງເຄາະແມ່ນ ຂະໜາດ 8 ຟຸດ, ເຫຼັກຕະປູຂະໜາດ 6 ຊັງຕີແມັດ, 8 ຊັງຕີແມັດ;

- ໃນກໍລະນີທີ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນຄຸ້ມຄອງໄພພິບັດແລ້ວ, ແມ່ນຈະບໍ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນສັງຄົມສົງເຄາະອີກ.

6. ບັນດາກຸ່ມເປົ້າໝາຍທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ຫາກເສຍຊີວິດ ໂດຍບໍ່ມີພາກສ່ວນໃດໃຫ້ການຊ່ວຍເຫຼືອ, ຈະໄດ້ຮັບການຊ່ວຍເຫຼືອສົງເຄາະເງິນຊາປານະກິດສົບຈາກກອງທຶນເປັນເງິນສົດ ຈຳນວນ 1.500.000 ກີບ/ສົບ.

## ໝວດທີ 4
## ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ

**ມາດຕາ 16 ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ**

ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະປະກອບມີ 02 ຂັ້ນ, ຂັ້ນແຂວງໄດ້ຮັບການແຕ່ງຕັ້ງໂດຍທ່ານເຈົ້າແຂວງ, ຂັ້ນເມືອງ-ນະຄອນ ໄດ້ຮັບການແຕ່ງຕັ້ງໂດຍທ່ານ ເຈົ້າເມືອງ-ເຈົ້ານະຄອນ ແລະ ມີກອງເລຂາຊ່ວຍວຽກຂັ້ນແຂວງ, ຂັ້ນເມືອງ-ນະຄອນ ຊຶ່ງໄດ້ຮັບການແຕ່ງຕັ້ງພ້ອມກັບຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ, ຂັ້ນເມືອງ-ນະຄອນ.

**ມາດຕາ 17 ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນແຂວງ.**

ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນແຂວງ ແມ່ນທ່ານ ຮອງເຈົ້າແຂວງ ຜູ້ຊີ້ນຳວຽກຂົງເຂດວັດທະນະທຳ-ສັງຄົມ ເປັນປະທານ, ມີທ່ານຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຮອງປະທານ ທັງເປັນຜູ້ປະຈຳການ ທ່ານຮອງຫົວໜ້າພະແນກການເງິນແຂວງ ເປັນຮອງ ແລະ ມີພາກສ່ວນທີ່ກ່ຽວຂ້ອງເປັນຄະນະ.

❖ ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ຂັ້ນແຂວງ ມີໜ້າທີ່ດັ່ງນີ້.

1. ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ຂັ້ນແຂວງ ມີໜ້າທີ່ໃນການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນແຂວງ;

2. ຄົ້ນຄວ້າພິຈາລະນາເງື່ອນໄຂການນຳໃຊ້ເງິນກອງທຶນສັງຄົມສົງເຄາະ ດັ່ງທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ປຸກລະດົມເອົາການຊ່ວຍເຫຼືອຈາກຊຸ້ມຊົນ, ທຸກພາກສ່ວນເສດຖະກິດ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດທາງດ້ານວິຊາການ, ທຶນຮອນ ແລະ ວັດຖຸສິ່ງຂອງເຄື່ອງຊ່ວຍເຫຼືອຕ່າງໆ ເພື່ອມາຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ;

4. ໂຄສະນາສຶກສາອົບຮົມທົ່ວສັງຄົມໃຫ້ເຂົ້າໃຈກ່ຽວກັບການສ້າງຕັ້ງກອງທຶນສັງຄົມສົງເຄາະ;

5. ປະສານສົມທົບ ແລະ ຊຸກຍູ້ ເຈົ້າເມືອງ ເຈົ້ານະຄອນ ໃຫ້ມີການແຕ່ງຕັ້ງ ຫຼື ປັບປຸງຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ຂັ້ນເມືອງ-ນະຄອນ ເພື່ອເຮັດໃຫ້ການບໍລິຫານວຽກງານດັ່ງກ່າວມີຄວາມເຂັ້ມແຂງ.

**ມາດຕາ 18 ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນເມືອງ-ນະຄອນ**

ຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ-ນະຄອນ ແມ່ນທ່ານຮອງເຈົ້າເມືອງ-ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ເປັນປະທານ, ມີທ່ານ ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການ ສັງຄົມເມືອງ-ນະຄອນ ເປັນຮອງປະທານ, ທັງເປັນຜູ້ປະຈຳການ, ທ່ານ ຮອງຫົວໜ້າຫ້ອງການການເງິນເມືອງ-ນະຄອນ ເປັນຮອງປະທານ ແລະ ພາກສ່ວນທີ່ກ່ຽວຂ້ອງເປັນຄະນະ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍທ່ານເຈົ້າເມືອງ-ເຈົ້ານະຄອນ.

❖ ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນເມືອງ-ນະຄອນ ມີໜ້າທີ່ດັ່ງນີ້.

1. ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນເມືອງ-ນະຄອນ ມີພາລະບົດບາດໃນການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນເມືອງ-ນະຄອນ;

2. ຄົ້ນຄວ້າພິຈາລະນາເງື່ອນໄຂການນຳໃຊ້ເງິນກອງທຶນສັງຄົມສົງເຄາະຂັ້ນເມືອງ-ນະຄອນ;

3. ປຸກລະດົມເອົາການຊ່ວຍເຫຼືອຈາກຊຸ້ມຊົນ, ທຸກພາກສ່ວນເສດຖະກິດ, ການຈັດຕັ້ງພາຍໃນ, ທາງດ້ານວິຊາການ, ທຶນຮອນ ແລະ ວັດຖຸສິ່ງຂອງເຄື່ອງຊ່ວຍເຫຼືອຕ່າງໆ ເພື່ອມາຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ;

4. ໂຄສະນາສຶກສາອົບຮົມທົ່ວສັງຄົມພາຍໃນເມືອງ-ນະຄອນ ເພື່ອໃຫ້ເຂົ້າໃຈກ່ຽວກັບການສ້າງຕັ້ງກອງທຶນສັງຄົມສົງເຄາະ.

**ມາດຕາ 19 ກອງເລຂາຊ່ວຍວຽກຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ**

ກອງເລຂາຊ່ວຍວຽກຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ ຊຶ່ງແມ່ນ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຜູ້ຊີ້ນຳວຽກສັງຄົມສົງເຄາະ ເປັນຫົວໜ້າ ໂດຍມີຫົວໜ້າຂະແໜງສັງຄົມສົງເຄາະ ເປັນຮອງ ທັງເປັນຜູ້ປະຈຳການ ແລະ ມີພາກສ່ວນທີ່ກ່ຽວຂ້ອງເປັນຄະນະ.

❖ ກອງເລຂາຊ່ວຍວຽກຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ ມີໜ້າທີ່ດັ່ງນີ້:

1. ກອງເລຂາຊ່ວຍວຽກຄະນະກຳມະການຂັ້ນແຂວງ ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນແຂວງ ໃນທຸກໆບັນຫາກ່ຽວກັບການຄຸ້ມຄອງກອງທຶນສັງຄົມສົງເຄາະ;

2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ເພື່ອປຶກສາຄົ້ນຄວ້າການຄຸ້ມຄອງ, ປະເມີນຜົນກະທົບ ແລະ ກວດກາເບິ່ງຕົວຈິງຂອງເຫດການໄພພິບັດ, ນັບທັງຮ່າງແຜນນະໂຍບາຍ, ລະບຽບການຄຸ້ມຄອງບັນດາເຕັກນິກ, ສັງລວມ, ວິໄຈ ແລະ ການໂຄສະນາເຜີຍແຜ່ຂໍ້ມູນຕ່າງໆກ່ຽວກັບໄພພິບັດ;

3. ຕິດຕາມສະພາບການເຄື່ອນໄຫວວຽກງານຄຸ້ມຄອງໄພພິບັດ ຂອງຂະແໜງການທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລ້ວລາຍງານເປັນແຕ່ລະໄລຍະໃຫ້ ຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ ຮັບຊາບ ແລະ ສະເໜີຂໍທິດຊີ້ນຳຈາກທ່ານເຈົ້າແຂວງໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ;

4. ສະຫຼຸບ ແຜນການເຄື່ອນໄຫວປະຈຳປີ ຂອງຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນແຂວງ;

5. ຮັບຜິດຊອບກຽມບົດບັນທຶກ ແລະ ສະຫຼຸບລາຍງານ ຜົນກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນແຂວງ;

6. ເຊີນຄະນະກຳມະການຂັ້ນແຂວງ, ຂັ້ນເມືອງ-ນະຄອນ ເຂົ້າຮ່ວມກອງປະຊຸມ ແລະ ກະກຽມການປະຊຸມວຽກງານສັງຄົມສົງເຄາະ ແຕ່ລະໄລຍະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 20 ກອງເລຂາຊ່ວຍວຽກຄະນະກຳມະການຂັ້ນເມືອງ-ນະຄອນ**

ກອງເລຂາຊ່ວຍວຽກຄະນະກຳມະການຂັ້ນເມືອງ-ນະຄອນ ແມ່ນຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ-ນະຄອນ ຜູ້ຊີ້ນຳວຽກສັງຄົມສົງເຄາະ ເປັນຫົວໜ້າ ໂດຍມີຫົວໜ້າໜ່ວຍງານສັງຄົມສົງເຄາະເມືອງ-ນະຄອນ ເປັນຮອງ ທັງເປັນຜູ້ປະຈຳການ ແລະ ມີພາກສ່ວນທີ່ກ່ຽວຂ້ອງເປັນຄະນະ.

❖ ກອງເລຂາຊ່ວຍວຽກຄະນະກຳມະການຂັ້ນເມືອງ-ນະຄອນ ມີໜ້າທີ່ດັ່ງນີ້:

1. ກອງເລຂາຊ່ວຍວຽກຄະນະກຳມະການຂັ້ນເມືອງ-ນະຄອນ ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະ ຂັ້ນເມືອງ-ນະຄອນ ໃນທຸກໆບັນຫາກ່ຽວກັບການຄຸ້ມຄອງກອງທຶນສັງຄົມສົງເຄາະ;

2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງພາຍໃນເມືອງ-ນະຄອນ ເພື່ອປຶກສາຄົ້ນຄວ້າການຄຸ້ມຄອງ, ປະເມີນຜົນກະທົບ ແລະ ກວດກາເບິ່ງຕົວຈິງຂອງເຫດການໄພພິບັດ, ນັບທັງຮ່າງແຜນນະໂຍບາຍ, ລະບຽບການຄຸ້ມຄອງບັນດາເຕັກນິກ, ສັງລວມ, ວິໄຈ ແລະ ການໂຄສະນາເຜີຍແຜ່ຂໍ້ມູນຕ່າງໆ ກ່ຽວກັບໄພພິບັດ;

3. ຕິດຕາມສະພາບການເຄື່ອນໄຫວວຽກງານຄຸ້ມຄອງໄພພິບັດຂອງຂະແໜງຕ່າງໆ ພາຍໃນເມືອງ-ນະຄອນ ທີ່ກ່ຽວຂ້ອງ ແລ້ວລາຍງານເປັນລາຍລັກອັກສອນໃນແຕ່ລະໄລຍະໃຫ້ຄະນະກຳມະການຄຸ້ມຄອງກອງທຶນສັງຄົມສົງເຄາະຂັ້ນເມືອງ-ນະຄອນ ຮັບຊາບ ແລະ ສະເໜີຂໍທິດຊີ້ນຳຈາກທ່ານເຈົ້າເມືອງ-ເຈົ້ານະຄອນ ໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ;

4. ສະຫຼຸບ ແລະ ຮ່າງແຜນການເຄື່ອນໄຫວປະຈຳປີ ຂອງຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ-ນະຄອນ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ-ນະຄອນ;

5. ຮັບຜິດຊອບກຽມບົດບັນທຶກ ແລະ ສະຫຼຸບລາຍງານ ຜົນກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ-ນະຄອນ;

6. ເຊີນຄະນະກຳມະການຂັ້ນເມືອງ-ນະຄອນ ເຂົ້າຮ່ວມກອງປະຊຸມ ແລະ ກະກຽມການປະຊຸມວຽກງານສັງຄົມສົງເຄາະ ແຕ່ລະໄລຍະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 5
## ສິດ ແລະ ພັນທະຂອງຜູ້ທີ່ໄດ້ຮັບການສົງເຄາະ

**ມາດຕາ 21 ສິດຂອງຜູ້ທີ່ໄດ້ຮັບການສົງເຄາະ**

1. ຮັບເອົາການຊ່ວຍເຫຼືອ ແລະ ນຳໃຊ້ຢ່າງຖືກຕ້ອງ;
2. ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການສົງເຄາະ;
3. ຕຳນິ, ສົ່ງຂ່າວ, ລາຍງານ, ຮ້ອງທຸກ, ຮ້ອງຟ້ອງ ຕໍ່ການກະທຳທີ່ບໍ່ຖືກຕ້ອງກ່ຽວກັບການສົງເຄາະ;
4. ສິດອື່ນໆຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ພັນທະຂອງຜູ້ທີ່ໄດ້ຮັບການສົງເຄາະ**

1. ສະໜອງຂໍ້ມູນຕາມຄວາມເປັນຈິງຂອງຕົນເອງ, ຄອບຄົວ ໃນເວລາຖືກປະສົບເຄາະຮ້າຍ;
2. ເຂົ້າຮ່ວມໃນການເຄື່ອນໄຫວວຽກງານສັງຄົມສົງເຄາະ;
3. ພັດທະນາຕົນເອງ ແລະ ຄອບຄົວໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ.

## ໝວດທີ 6
## ການປະກອບເອກະສານ

**ມາດຕາ 23 ການປະກອບເອກະສານຂໍການສົງເຄາະທີ່ໄດ້ຮັບຜົນກະທົບຈາກໄພພິບັດ**

- *ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນກໍລະນີຜູ້ກ່ຽວບໍ່ສາມາດຂຽນໄດ້ດ້ວຍຕົນເອງ;*
- ສຳມະໂນຄົວ ຫຼື ບັດປະຈຳຕົວ;
- ບົດບັນທຶກຄວາມເສຍຫາຍທີ່ໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງບ້ານ ແລະ ເມືອງ-ນະຄອນ;
- ພາບຖ່າຍຂໍ້ມູນຫຼັກຖານຢັ້ງຢືນຜົນເສຍຫາຍຕົວຈິງ;
- ເບີໂທລະສັບນາຍບ້ານ, ເບີໂທລະສັບ ແລະ ຮູບຖ່າຍຮູບປະພັນຂອງຜູ້ໄດ້ຮັບຜົນກະທົບ.

**ມາດຕາ 24 ການປະກອບເອກະສານຂໍການສົງເຄາະສຳລັບຜູ້ດ້ອຍໂອກາດ**

1. ສຳລັບຜູ້ພິການ ແລະ ຜູ້ອາຍຸສູງ;
- ໜັງສືສະເໜີຂອງຜູ້ກ່ຽວ ຫຼື ຍາດພີ່ນ້ອງ;
- ຊີວະປະຫວັດຂອງຜູ້ກ່ຽວ ທີ່ໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງ;
- ໃບຢັ້ງຢືນທີ່ຢູ່ ຫຼື ສຳມະໂນຄົວ;
- ໃບປະເມີນສະພາບຄອບຄົວ ຫຼື ໜັງສືຢັ້ງຢືນຈາກອຳນາດການປົກຄອງທີ່ກ່ຽວຂ້ອງ;

2. ສຳລັບເດັກ ທີ່ຕ້ອງການປົກປ້ອງພິເສດ
- ໜັງສືສະເໜີ ຈາກຜູ້ປົກຄອງ ຫຼື ອຳນາດການປົກຄອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

- ຊີວະປະຫວັດທີ່ໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງ;
- ໃບຢັ້ງຢືນການເກີດ ຫຼື ສຳມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່;
- ສຳລັບເດັກທີ່ຖືກເຄາະຮ້າຍຈາກການຄ້າມະນຸດຕ້ອງມີໃບຢັ້ງຢືນການລະບຸຕົວຕົນຂອງຜູ້ຖືກເຄາະຮ້າຍ.

3. ສຳລັບຜູ້ທີ່ຮ້ອງຂໍການສົງເຄາະ ກໍລະນີເສຍຊີວິດຈາກໄພພິບັດ

- ໜັງສືສະເໜີ ຈາກຄອບຄົວ ຫຼື ອຳນາດການປົກຄອງບ້ານ;
- ໃບຢັ້ງຢືນການເສຍຊີວິດຈາກອຳນາດການປົກຄອງ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
- ສຳມະໂນຄົວ ຫຼື ໃບຢັ້ງຢືນການເສຍຊີວິດ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມສຳລັບບຸກຄົນທົ່ວໄປ**

1. ຂັດຂວາງ, ເມີນເສີຍ ຫຼື ແຊກແຊງ ເຂົ້າກິດຈະການວຽກງານກອງທຶນສັງຄົມສົງເຄາະ ເປັນການສ້າງຄວາມຫຍຸ້ງຍາກ;.
2. ປອມແປງລະດົມທຶນຮອນ ແລະ ວັດຖຸສິ່ງຂອງເພື່ອຕົນ ແລະ ໝູ່ຄະນະ;
3. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ພະນັກງານ ເປັນການຍັກຍອກເອົາເງິນ, ວັດຖຸໃນກອງທຶນສັງຄົມສົງເຄາະ;
4. ມີພຶດຕິກຳອື່ນເປັນການລະເມີດກົດໝາຍ.

**ມາດຕາ 26 ຂໍ້ຫ້າມສຳລັບພະນັກງານ**

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເຄື່ອນໄຫວເພື່ອຜົນປະໂຫຍດສ່ວນຕົວ ຫຼື ໝູ່ຄະນະ ສ້າງຄວາມເສຍຫາຍໃຫ້ກອງທຶນສັງຄົມສົງເຄາະ;
2. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ໃນການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ທີ່ໄດ້ຮັບມອບໝາຍ;
3. ສົມຮູ້ຮ່ວມຄິດກັບພາກສ່ວນອື່ນເພື່ອຍັກຍອກເອົາເງິນກອງທຶນ;
4. ມີພຶດຕິກຳອື່ນເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 27 ຂໍ້ຫ້າມສຳລັບຜູ້ທີ່ໄດ້ຮັບການສົງເຄາະ**

1. ໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງ ຫຼື ປອມແປງເອກະສານເພື່ອຜົນປະໂຫຍດຂອງຕົນ;
2. ສົມຮູ້ຮ່ວມຄິດກັບພະນັກງານ ເພື່ອຍັກຍອກກອງທຶນ;
3. ບິດເບືອນຄວາມຈິງ, ກ່າວຫາພະນັກງານ ແລະ ສ້າງຄວາມຫຍຸ້ງຍາກໃຫ້ພະນັກງານ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 28 ຮູບການແກ້ໄຂຂໍ້ຂັດແຍ່ງ**

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ.

**ມາດຕາ 29 ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີສາມາດແກ້ໄຂດ້ວຍການປຶກສາຫາລື, ເຈລະຈາ, ຕົກລົງກັນ ຫຼື ໄກ່ເກ່ຍ ເພື່ອໃຫ້ຕ່າງຝ່າຍໄດ້ຮັບຜົນປະໂຫຍດ.

**ມາດຕາ 30 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີສາມາດແກ້ໄຂທາງດ້ານບໍລິຫານ ດ້ວຍການສະເໜີໃຫ້ອົງການບໍລິຫານພິຈາລະນາແກ້ໄຂທາງດ້ານບໍລິຫານ.

**ມາດຕາ 31 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີສາມາດສະເໜີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 32 ການຕັດສິນຂອງສານ**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຜ່ານການແກ້ໄຂດ້ວຍຮູບການອື່ນບໍ່ສາມາດແກ້ໄຂໄດ້ ຄູ່ກໍລະນີມີສິດຮ້ອງຟ້ອງຂຶ້ນສານ ເພື່ອໃຫ້ສານຕັດສິນ ຫຼື ພິຈາລະນາຕາມກົດໝາຍ.

## ໝວດທີ 9
## ການກວດກາກອງທຶນສັງຄົມສົງເຄາະ

**ມາດຕາ 33 ອົງການກວດກາ**

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງກອງທຶນສັງຄົມສົງເຄາະ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນປະກອບດ້ວຍ ສະພາປະຊາຊົນແຂວງ, ອົງການກວດສອບປະຈໍາພາກກາງ, ອົງການກວດກາລັດຂັ້ນແຂວງ, ຂັ້ນເມືອງ-ນະຄອນ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ແລະ ຂັ້ນເມືອງ-ນະຄອນ ໃນທົ່ວແຂວງສະຫວັນນະເຂດ.

**ມາດຕາ 34 ເນື້ອໃນການກວດກາ**

1. ກວດກາການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ມາດຕະການ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ກວດກາການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ກວດກາຄວາມຮັບຜິດຊອບຂອງອົງການຄຸ້ມຄອງ ແລະ ກວດກາກອງທຶນສັງຄົມສົງເຄາະ;

4. ກວດກາຕາມການສະເໜີ, ການຮ້ອງຂໍຂອງປະຊາຊົນຕໍ່ກັບພຶດຕິກຳຂອງພະນັກງານຄຸ້ມຄອງກອງທຶນສັງຄົມສົງເຄາະ ທີ່ຂາດຄວາມສະເໝີພາບ, ຂາດຄວາມຍຸຕິທຳ ແລະ ຂາດຄວາມໂປ່ງໃສ.

**ມາດຕາ 35 ຮູບການກວດກາ**

1. ການກວດກາປົກກະຕິ ຊຶ່ງການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາ ທີ່ແນ່ນອນ;

2. ການກວດກາໂດຍໄດ້ແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າໃນເວລາອັນແນ່ນອນ;

3. ການກວດກາແບບກະທັນຫັນ ແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາຮັບຊາບກ່ອນ;

ໃນເວລາດຳເນີນການເຄື່ອນໄຫວຕິດຕາມກວດກາຕ້ອງປະຕິບັດຢ່າງເຂັ້ມງວດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານປະກອບສ່ວນດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການຢ່າງເໝາະສົມ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນຕິຕຽນຄວາມຜິດ, ປັບໃໝໃຊ້ແທນຄ່າເສຍຫາຍ ຫຼື ລົງວິໄນຕາມຄວາມຜິດ ຫຼື ລົງໂທດທາງອາຍາຕາມແຕ່ລະກໍລະນີໜັກ ຫຼື ເບົາ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງມອບໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນໃຈກາງໃນການປະສານສົມທົບກັບຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ ແລະ ຄະນະກຳມະການອື່ນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດ.

**ມາດຕາ 39 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ນັບແຕ່ວັນທີ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງກອງທຶນສັງຄົມສົງເຄາະແຂວງ ສະບັບເລກທີ 1574/ຈຂ.ສຂ, ລົງວັນທີ 17 ກັນຍາ 2019;

ຂໍ້ກຳນົດ ບົດບັນຍັດໃດທີ່ວາງອອກທີ່ມີເນື້ອໃນບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງ**

ບຸນໃຈນ ອຸບົນປະເສີດ